**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ຫ້ອງການ

ເລກທີ...540..... /ຫກ

ນະຄອນຫຼວງວຽງຈັນ, ວັນທີ10..ກໍລະກົດ...2023

# ແຈ້ງການ

**ເຖິງ: ບັນດາ ຊາວໜຸ່ມ, ເຍົາວະຊົນລາວ ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ເຊີນເຂົ້າຮ່ວມແຂ່ງຂັນໂຕ້ວາທີ ພາຍໃຕ້ຫົວຂໍ້: "ທັກສະສີຂຽວຂອງຊາວໜຸ່ມເພື່ອການພັດທະນາແບບຍືນຍົງ"**

- ອີງໃສ່ ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ປີ 2021-2030;
- ອີງຕາມ ແຜນການຮ່ວມມືລະຫວ່າງ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ກັບ ອົງການ UNFPA ປະຈໍາປີ 2023;
- ອີງຕາມ ແຜນການຈັດກິດຈະກໍາສະເຫຼີມສະຫຼອງວັນໄວໜຸ່ມສາກົນ ປະຈໍາປີ 2023.

ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຮ່ວມກັບ ອົງການສະຫະປະຊາຊາດກອງທຶນສໍາລັບປະຊາກອນ UNFPA ໄດ້ຈັດກິດຈະກໍາແຂ່ງຂັນໂຕ້ວາທີ **ພາຍໃຕ້ຫົວຂໍ້: "ທັກສະສີຂຽວສໍາລັບໄວໜຸ່ມ ເພື່ອຄວາມຍືນຍົງຂອງໂລກ"** ເພື່ອສ້າງຂະບວນການສະເຫຼີມສະຫຼອງວັນໄວໜຸ່ມສາກົນ ປະຈໍາປີ 2023 ຈຸດປະສົງແມ່ນເພື່ອເປັນການປູກຈິດສໍານຶກທັກສະສີຂຽວໃຫ້ແກ່ໄວໜຸ່ມ, ໄດ້ເປີດເວທີໃຫ້ແກ່ໄວໜຸ່ມມີໂອກາດເສີມສ້າງທັກສະ ແລະ ຄວາມສາມາດໃນການສະ ແດງຄໍາຄິດເຫັນແບບສ້າງສັນ ຜ່ານການໂຕ້ວາທີ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

## 1. ເງື່ອນໄຂການເຂົ້າຮ່ວມແຂ່ງຂັນ

1) ຜູ້ເຂົ້າຮ່ວມການແຂ່ງຂັນ ແມ່ນອາຍຸແຕ່ 15-25 ປີ, ບໍ່ຈໍາກັດເພດ, ຊົນເຜົ່າ;
1) ການໂຕ້ວາທີຈະໃຊ້ກົດກະຕິກາ ການໂຕ້ວາທີ ແບບສາກົນ ຄືທັງສອງຝ່າຍມີ ຝ່າຍລະ 3 ຄົນ ແບ່ງອອກເປັນຝ່າຍສະເໜີ ແລະ ຝ່າຍຄ້ານ;
2) ການແຂ່ງຂັນແມ່ນກໍານົດເອົາ ທີມລະ 4 ຄົນ (ຫົວໜ້າທີມ 1 ຄົນ ແລະ ຜູ້ສະໜັບສະໜູນ 2 ຄົນ ແລະ ສໍາຮອງ 1 ຄົນ) ແລະ ໃຫ້ສົ່ງລາຍຊື່, ເບີໂທລະສັບ ແລະ ຫົວຂໍ້ແຂ່ງຂັນ ຜ່ານສິ່ງເຂົ້າອິນບ໋ອກ FB page: ປຶກສາບັນຫາໄວໜຸ່ມ ຫຼື ສົ່ງໂດຍກົງຢູ່ ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ບ້ານໂພນທັນ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ ຫຼື ໂທສອບຖາມຂໍ້ມູນຜ່ານທາງເບີໂທລະສັບສາຍດ່ວນໃຫ້ຄໍາປຶກສາແກ່ຊາວໜຸ່ມ-ເຍົາວະຊົນ 1554;
Whatsapp: 55300195, 55361055, 55132046
3) ເປີດຮັບສະໝັກແຕ່ວັນທີ 12 ກໍລະກົດ 2023 ແລະ ປິດຮັບສະໝັກວັນທີ 28 ກໍລະກົດ 2023

4) ວັນທີ 31 ກໍລະກົດ 2023 ຈັດກອງປະຊຸມແນະນຳການໂຕ້ວາທີ ຈົກສະຫຼາກແບ່ງສາຍ ແລະ ຈັບຄູ່ (ຈັດກອງປະຊຸມປະຖົມນິເທດ ແລະ ອົບຮົມໃຫ້ຜູ້ເຂົ້າຮ່ວມແຂ່ງຂັນ) ທີ່ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
5) ວັນທີ 6 ສິງຫາ 2023 ຈັດການແຂ່ງຂັນໂຕ້ວາທີ ຮອບທີ 1 ຄູ່ເຂົ້າຮ່ວມແຂ່ງຂັນ 16 ທີມ ຄັດໃຫ້ເຫຼືອ 8 ທີມ;
6) ວັນທີ 8 ສິງຫາ 2023 ຈັດການແຂ່ງຂັນໂຕ້ວາທີ ຮອບທີ 2 ເຂົ້າຮ່ວມແຂ່ງຂັນ 8 ທີມ ຄັດໃຫ້ເຫຼືອ 2 ທີມ;
7) ວັນທີ 11 ສິງຫາ 2023 ແຂ່ງຂັນໂຕ້ວາທີ ຮອບຊິງຊະນະເລີດ ແລະ ພິທີມອບ-ຮັບລາງວັນ ໃນງານສະເຫຼີມສະຫຼອງ ວັນໄວໜຸ່ມສາກົນ ທີ່ ສູນການຄ້າລາວໄອເຕັກ.

**2. ປະເພດລາງວັນ**

1) ລາງວັນທີ 1 ລາງວັນຊະນະເລີດ ອຸປະກອນການສຶກສາ ມູນຄ່າ 5.000.000 ກີບ ພ້ອມໃບຍ້ອງຍໍ ຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
2) ລາງວັນທີ 2 ລາງວັນຮອງຊະນະເລີດ ອຸປະກອນການສຶກສາ ມູນຄ່າ 3.000.000 ກີບ ພ້ອມໃບຍ້ອງຍໍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
3) ລາງວັນທີ 3 ລາງວັນຮອງຊະນະເລີດ ອຸປະກອນການສຶກສາ ມູນຄ່າ 2.000.000 ກີບ ພ້ອມໃບຍ້ອງຍໍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
4) ລາງວັນທີ 4 ລາງວັນຊົມເຊີຍ ອຸປະກອນການສຶກສາ ມູນຄ່າ 1.000.000 ກີບ ພ້ອມໃບຊົມເຊີຍ ຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງຊາວໜຸ່ມ, ເຍົາວະຊົນລາວ ໃນຂອບເຂດທົ່ວປະເທດ ເພື່ອເຂົ້າຮ່ວມການແຂ່ງຂັນ.

**ຫົວໜ້າຫ້ອງການ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ
ຫ້ອງການ

**ນ.ອຸໄລ ຈັນທະວົງ**